# ຄຳນຳ

ພຣະຄັມພີໄດ້ແບ່ງເປັນສອງພາກໃຫຍ່ໆຄື ພຣະຄັມພີເດີມແລະພຣະຄັມພີໃໝ່ ທັງສອງພາກນີ້ໄດ້ເວົ້າເຣື່ອງຄຳພັນສັນຍາຂອງພຣະເຈົ້າທີ່ມີຕໍ່ມະນຸດ ແລະພຣະຄັມພີເດີມໄດ້ກ່ຽວຂ້ອງກັບພວກຢູດາ ຊຶ່ງພຣະເຈົ້າຊົງສັ່ງໄວ້ກັບໂມເຊດ້ວຍໂລຫິດງົວໂຕເຖິກ (ອົພຍົພ ໒໔:໔-໘) ສ່ວນພຣະຄັມພີໃໝ່ໄດ້ຕັ້ງຢູ່ກັບໂລຫິດຂອງພຣະເຢຊູເອງ ເພື່ອຄວາມລອດພົ້ນຂອງມະນຸດທັງປວງ (ເຮັບເຣີ ໙:໑໕; ໑໒:໒໔) ທີ່ວ່າພຣະຄັມພີໃໝ່ກໍເພາະມັນສືບຕໍ່ມາຈາກພຣະຄັມພີເດີມ ແຕ່ດີກວ່າຂອງເດີມ ພຣະບັນຍັດເປັນສິ່ງສຳຄັນສຳລັບພຣະຄັມພີເດີມ ແລະພຣະຄຸນຂອງພຣະເຈົ້າກໍເປັນສິ່ງສຳຄັນສຳລັບພຣະຄັມພີໃໝ່ (ໂຢຮັນ ໑:໑໗) ພຣະຄັມພີເດີມເປັນຮາກເຫງົ້າຂອງພຣະຄັມພີໃໝ່ ພຣະຄັມພີເດີມບໍ່ໄດ້ອະທິບາຍເຣື່ອງຂອງພຣະເຢຊູ ສ່ວນພຣະຄັມພີໃໝ່ໄດ້ອະທິບາຍຢ່າງຊັດເຈນແທ້ ແຕ່ເພື່ອຈະໃຫ້ເຂົ້າໃຈພຣະຄັມພີດີ ຕ້ອງຮຽນພຣະຄັມພີທັງສອງພ້ອມກັນ

## ວ່າດ້ວຍພຣະຄັມພີໃໝ່

໑. ພຣະຄັມພີໃໝ່ມີຢູ່ ໒໗ ເຫລັ້ມ ແລະແບ່ງເປັນສີ່ພາກຄື

ພາກ ໑ ວ່າດ້ວຍຂ່າວປະເສີດມີ ໔ ເຫລັ້ມ ຊຶ່ງອະທິບາຍເຣື່ອງການສະເດັດມາ ຂອງພຣະເຢຊູ ທັງເຣື່ອງພາຣະກິດຂອງພຣະອົງ ເຣື່ອງສິ້ນພຣະຊົນ ເຣື່ອງຄືນພຣະຊົນເຣື່ອງການສະເດັດຂຶ້ນຟ້າສວັນ

ພາກ ໒ ວ່າດ້ວຍການຕັ້ງຄຣິສຕະຈັກມີ ໑ ເຫລັ້ມຄືໜັງສືກິດຈະການ

ພາກ ໓ ວ່າດ້ວຍຄຳສັ່ງສອນຄຣິສຕະຈັກມີ ໒໑ ເຫລັ້ມ

ພາກ ໔ ວ່າດ້ວຍຄຳທຳນວາຍມີ ໑ ເຫລັ້ມຄືໜັງສືຄຳປາກົດ

໒. ໜັງສືຂ່າວປະເສີດສະແດງໃຫ້ເຫັນອົງຜູ້ຕັ້ງທາງໄປຫາພຣະເຈົ້າ ໜັງສືຄຳໂອວາດສະແດງຂໍ້ດຳຣັດແຫ່ງທາງນີ້ ໜັງສືຄຳທຳນວາຍສະແດງເຖິງແຜນການຂອງພຣະເຈົ້າທີ່ສຳເຣັດແລ້ວ ແລະທີ່ຍັງບໍ່ສຳເຣັດ

໓. ພຣະຄັມພີໃໝ່ວ່າດ້ວຍເຫດການຕ່າງໆ ທີ່ໄດ້ບັງເກີດຂຶ້ນເປັນລະຍະເວລາປະມານ ໑໐໐ ປີຖ້ວນ ຄົນທີ່ໄດ້ແຕ່ງພຣະຄັມພີໃໝ່ມີຢູ່ ໘ ຄົນ ຄື: ຍາໂກໂບ, ມາຣະໂກ, ມັດທາຍ, ໂປໂລ, ເປໂຕ, ລູກາ, ຢູເດ, ໂຍຮັນ

໔. ພຣະຄັມພີໃໝ່ເຫລົ້ມນີ້ສຳຄັນທີ່ສຸດ ເພາະເປັນປະວັດສາດຊຶ່ງບໍ່ມີບຸກ-ຄົນໃດ ຖ້າປະຕິເສດວ່າບໍ່ຈິງໄດ້ແລະເປັນຂໍ້ຄວາມທີ່ຫລໍ່ລ້ຽງຊີວິດຈິດໃຈຂອງຄົນທີ່ເຊື່ອຕໍ່ໄປ

## ພາກທີ ໑ ເຣື້ອງຂ່າວປະເສີດ

ໜັງສືທັງສີ່ເຫລັ້ມຄື: ມັດທາຍ, ມາຣະໂກ, ລູກາ ແລະໂຍຮັນ ເຮົາເອີ້ນວ່າ ໜັງສືຂ່າວປະເສີດດັ່ງທີ່ໄດ້ຂຽນໃນລູກາ ບົດ ໒:໑໐ ພຣະ-ຄັມພີເດີມໄດ້ສະແດງພຣະປະສົງຂອງພຣະຜູ້ໄຖ່ນັ້ນ ສ່ວນໜັງສືຂ່າວປະເສີດໄດ້ແຈ້ງຄວາມວ່າ ພຣະຜູ້ໄຖ່ອົງນັ້ນຊົງເກີດແລ້ວໃນໂລກນີ້ ຂ່າວອັນນີ້ແຫລະແມ່ນຂ່າວປະເສີດ

# ເຫດໃດຈຶ່ງມີສີ່ຄົນແຕ່ງເລື່ອງຂ່າວປະເສີດ

໑. ພຣະເຈົ້າຊົງມີພຣະປະສົງ ຈະເລືອກເອົາສີ່ຄົນ ເພື່ອຮຽບຮຽງ ເລື່ອງ ພຣະເຢຊູ ເພາະເປັນເລື່ອງສຳຄັນທີ່ສຸດແລະກ່ຽວຂ້ອງກັບແຜນການແຫ່ງຄວາມພົ້ນຂອງພຣະເຈົ້າ

໒. ເວລາຄົນທັງສີ່ໄດ້ລົງມືແຕ່ງເລື່ອງຂ່າວປະເສີດນີ້ ພຣະວິນຍານບໍລິສຸດໄດ້ບັນດົນຈິດໃຈໃຫ້ພວກເພິ່ນເລືອກເອົາທາງຂຽນ ຜູ້ລະແບບ ຜູ້ລະທາງ ເພື່ອຄວາມທີ່ຂຽນນັ້ນຈະໄດ້ສຳເລັດໃນໜັງສືທຸກເຫລັ້ມ ຕາມພຣະປະສົງຂອງພຣະເຈົ້າ

໓. ອີກປະການນຶ່ງ ພຣະເຈົ້າຊົງເລືອກເອົາສີ່ຄົນໃຫ້ຂຽນເລື່ອງລັກສນະ ພຣະບຸດຂອງພຣະອົງຕາມຄວາມເຫັນຂອງພວກເຂົາເອງ ເພື່ອໃຫ້ຖືກກັບຈິດໃຈຂອງຜູ້ອ່ານ ຄື :

ທ່ານມັດທາຍ ຜູ້ເປັນນາຍພາສີ ໄດ້ຖືກພຣະເຈົ້າຊົງເລືອກໃຫ້ເປັນຜູ້ສະແດງແກ່ພວກອິສຣາເອັນວ່າ ພຣະເຢຊູນັ້ນແມ່ນພຣະເມຊີອາ ຄືອົງກະສັດທີ່ເຂົາກຳລັງຄອງຫາ ຕາມຄຳບອກຂອງຜູ້ທຳນວາຍ

ທ່ານມາຣະໂກ ຜູ້ເປັນຄົນດຸໝັ່ນແລະກະຕືລືລົ້ນ ພຣະເຈົ້າຊົງໂຜດໃຫ້ເພິ່ນ ສະແດງເລື່ອງ ພຣະບຸດ ຂອງພຣະເຈົ້າ ຜູ້ຊົງເປັນຂ້າໃຊ້ຂອງພຣະບິດາ

ທ່ານລູກາ  ຜູ້ເປັນນັກປາດແລະເປັນທ່ານໝໍ  ພຣະເຈົ້າຊົງໂຜດໃຫ້ເພິ່ນແຕ່ງເຣື່ອງພຣະຊົວະປະວັດແລະເຫດການຕ່າງໆ  ຂອງພຣະເຢຊູຢ່າງຖ້ວນຖີ່ ລູກາ ໑:໓

ທ່ານໂຢຮັນ  ຜູ້ສນິດຕິດຕາມພຣະເຢຊູ  ຈົນເພິ່ນມັກເອີ້ນຕົນເອງວ່າ "ສິດທີ່ພຣະເຢຊູຊົງຮັກ" ພຣະວິນຍານຂອງພຣະເຈົ້າໄດ້ຊົງໂຜດໃຫ້ເພິ່ນສະແດງຄວາມຮັກຂອງພຣະອົງແລະຄວາມສນິດສນົມຣະຫວ່າງພຣະອົງກັບໝູ່ລູກສິດຢ່າງແຈ່ມແຈ້ງ

## ຜູ້ທີ່ຈະອ່ານໜັງສືນີ້

໑. ໜັງສືຂ່າວປະເສີດທັງ ໔ ເຫລັ້ມ ໄດ້ມີຄວາມຈຳເປັນກັບມະນຸດທຸກຊາດ  ແລະໄດ້ມີຄົນຫລາຍຈຳພວກຢາກຮູ້ຂ່າວປະເສີດນີ້

- ມັດທາຍ  ໄດ້ຂຽນສຳລັບພວກຢູເດ
- ມາຣະໂກ  ໄດ້ຂຽນສຳລັບພວກໂຣມ
- ລູກາ  ໄດ້ຂຽນສຳລັບພວກກຣີກ (ເຣເລັນ)
- ໂຢຮັນ  ໄດ້ຂຽນສຳລັບຄຣິສຕະຈັກທົ່ວໄປ

໒. ພວກໂຣມທີ່ບໍ່ຮູ້ຈັກພຣະຄຳພີເດີມ  ຈະເຂົ້າໃຈໜັງສືຂ່າວປະເສີດຂອງທ່ານມັດທາຍໄດ້ຍາກ  ເພາະວ່າຄຳອ້າງເຖິງພຣະຄຳພີເດີມໄດ້

ມີຫລາຍຂໍ້ຫລາຍຄວາມໃນໜັງສືເຫລັ້ມນີ້   ສ່ວນໃນໜັງສືມາຣະໂກ
ຈຶ່ງມີຄຳອະທິບາຍຮີດຄອງຂອງຊາວຢູດາ

໓. ທ່ານໂຢຮັນໄດ້ແຕ່ງເຣື່ອງ ຂ່າວປະເສີດ ໄວ້ເມື່ອຄຣິສຕະຈັກ ທີ່ເກີດມີ
ມາຕາມທີຫລັງ  ເພາະໃນຄາວນັ້ນໄດ້ມີຄຣູສອນແລະມີອາຈານປອມ
ບອກຄວາມບໍ່ຈິງວ່າ "ພຣະເຢຊູບໍ່ໄດ້ມາຈາກພຣະເຈົ້າ ແລະບໍ່ແມ່ນ
ພຣະບຸດຂອງພຣະເຈົ້າ"  ສນັ້ນພຣະວິນຍານບໍຣິສຸດຈຶ່ງຊົງໂຜດໃຫ້
ທ່ານໂຢຮັນຂຽນເຣື່ອງພຣະເຢຊູຕື່ມອີກ  ດັ່ງເນື້ອຄວາມໃນບົດ ໑:໑
ວ່າ "ພຣະທັມນັ້ນໄດ້ມີຢູ່ກ່ອນແລ້ວຕັ້ງແຕ່ດັ້ງເດີມ  ພຣະທັມນັ້ນໄດ້
ຢູ່ກັບພຣະເຈົ້າ  ແລະພຣະທັມນັ້ນເປັນພຣະເຈົ້າ"  ໃນໜັງສືໂຢຮັນ
ທັງໝົດໄດ້ສະແດງວ່າ  ພຣະເຢຊູເປັນອັນນຶ່ງອັນດຽວກັນກັບພຣະ-
ບິດາ  ດັ່ງນັ້ນພຣະເຈົ້າຜູ້ຊົງປະກອບດ້ວຍພຍາປັນຍາ  ຈຶ່ງຊົງໂຜດ
ໃຫ້ມະນຸສໂລກມີຂ່າວປະເສີດ ອັນເໝາະສົມ ກັບຄວາມປະສົງຂອງຄົນ
ທຸກຍຸກທຸກສໄມ

## ເນື້ອຄວາມໜັງສືເຫລັ້ມ

໑. ໜັງສືຂ່າວປະເສີດເຫລັ້ມນີ້ບໍ່ໄດ້ເລົ່າພຣະຊີວະປະວັດແລະພາຣະກິດຂອງ
ພຣະເຢຊູໂດຍຕລອດ  ແຕ່ໄດ້ເລົ່າສະເພາະທີ່ເຫັນວ່າເປັນເຣື່ອງຈິງ
ແລະສຳຄັນ  ໂຢຮັນ ໒໑:໒໔

໒. ໄດ້ເປີດເຜີຍໃຫ້ເຫັນສພາບຂອງພຣະອົງ

໓. ໃນໜັງສືເຫລັ້ມນີ້ວ່າດ້ວຍຂ່າວປະເສີດຢ່າງດຽວກັນ  ແລະໄດ້ເລົ່າ
ພາຣະກິດຂອງພຣະເຢຊູອົງດຽວ  ແຕ່ໄດ້ເລົ່າເປັນລັກສນະສື່ແບບ

໔. ຂໍ້ປຽບທຽບ ເນື້ອອ່ານໜັງສືຂ່າວປະເສີດກໍຮູ້ວ່າ ສະບັບຂອງທ່ານມັດທາຍ ທ່ານມາຣະໂກແລະທ່ານລູກາມີເນື້ອຄວາມຄ້າຍໆກັນຄື: ສ່ວນຫລາຍພວກເພິ່ນໄດ້ເລົ່າໃນເຣື່ອງດຽວກັນ ແຕ່ໜັງສືໂຍຮັນ ໄດ້ເລົ່າແຕກຕ່າງອອກໄປ ສະນັ້ນເຮົາຈຶ່ງມັກເອີ້ນໜັງສືທັງສາມນີ້ວ່າ "ເປັນຂ່າວປະເສີດແບບດຽວກັນ"

## ເນື້ອເຣື່ອງໃນໜັງສືມັດທາຍ ມາຣະໂກ ແລະລູກາ

໑. ຄວາມເປັນມະນຸດຂອງພຣະເຢຊູ

໒. ພາຣະກິດຂອງພຣະເຢຊູ

໓. ພຣະເຢຊູຊົງສັ່ງສອນຄົນຫລາຍຄົນ

໔. ພາຣະກິດຂອງພຣະເຢຊູໃນແຂວງຄາລິເລ

## ເນື້ອເຣື່ອງໃນໜັງສືໂຍຮັນ

໑. ຄວາມເປັນພຣະເຈົ້າຂອງພຣະເຢຊູ

໒. ຄຳສອນຂອງພຣະເຢຊູ

໓. ພຣະເຢຊູຊົງສັ່ງສອນຄົນຜູ້ດຽວ

໔. ພາຣະກິດຂອງພຣະເຢຊູໃນແຂວງຢູດາ